ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 185 /ລບ

ນະຄອນຫຼວງວຽງຈັນ, ວັນທີ 20.06.2022

# ດຳລັດ
# ວ່າດ້ວຍເຂດສະຫງວນຂອງທາງຫຼວງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 03/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 220/ຍທຂ, ລົງວັນທີ 25 ເມສາ 2022.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາເຂດສະຫງວນຂອງທາງຫຼວງ ເພື່ອບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຄອບຄອງ, ທຳລາຍ ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນ ຄວາມປອດໄພຂອງທາງຫຼວງ ຫຼື ກໍ່ສ້າງໃດໜຶ່ງ ໃນເຂດສະຫງວນຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ແນໃສ່ເຮັດໃຫ້ວຽກງານຄຸ້ມຄອງເຂດສະຫງວນ ມີປະສິດທິພາບ, ປະສິດທິຜົນ ແລະ ປົກປັກຮັກສາສິ່ງແວດລ້ອມ ພ້ອມທັງຮັບປະກັນໃຫ້ການຈະລາຈອນ ມີຄວາມສະດວກ, ປອດໄພ, ວ່ອງໄວ, ເປັນລະບຽບຮຽບຮ້ອຍ ແລະ ສວຍງາມ ປະກອບສ່ວນເຂົ້າໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ເຂດສະຫງວນຂອງທາງຫຼວງ**

ເຂດສະຫງວນຂອງທາງຫຼວງ ແມ່ນ ພື້ນທີ່ທັງໝົດຂອງທາງຫຼວງ ຢູ່ໜ້າດິນ, ເທິງໜ້າດິນ, ໃຕ້ດິນ ແລະ ເທິງໜ້ານໍ້າທີ່ສະຫງວນໄວ້ ເພື່ອປ້ອງກັນ, ພັດທະນາ ແລະ ຂະຫຍາຍທາງຫຼວງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ທາງແຍກຕ່າງລະດັບ** ໝາຍເຖິງ ຈຸດທີ່ມີທາງຕັດກັນ ຫຼື ຄົບກັນ ແຕ່ສອງເສັ້ນຂຶ້ນໄປ ທີ່ມີລະດັບໜ້າທາງແຕກຕ່າງກັນ;

2. **ທາງວົງວຽນ** ໝາຍເຖິງ ຈຸດທີ່ມີທາງຕັດກັນ ຫຼື ຄົບກັນ ແຕ່ສອງເສັ້ນຂຶ້ນໄປ ໂດຍມີການສັນຈອນອ້ອມວົງມົນ ໄປໃນທິດທາງດຽວກັນ;

3. **ດ້ານເໜືອນ້ຳໄຫຼ** ໝາຍເຖິງ ເບື້ອງຈາກຈຸດສັງເກດຂອງກິດຈະການທາງຫຼວງ ໄປຕາມທິດທາງທວນກະແສນ້ຳໄຫຼ;

4. **ດ້ານໃຕ້ນ້ຳໄຫຼ** ໝາຍເຖິງ ເບື້ອງຈາກຈຸດສັງເກດຂອງກິດຈະການທາງຫຼວງ ໄປຕາມທິດທາງນ້ຳໄຫຼ;

5. **ຈຸດສັງເກດ** ໝາຍເຖິງ ຈຸດຂອບນອກສຸດຂອງໂຄງສ້າງກິດຈະການທາງຫຼວງ ໂດຍຖືເອົາຈຸດໃຈກາງຂອງໂຄງສ້າງ ເປັນໂຕເລີ່ມຕົ້ນວັດແທກ.

**ມາດຕາ 4 ຫຼັກການກ່ຽວກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງ**

ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນຜັງຕົວເມືອງ ແລະ ແຜນຍຸດທະສາດພັດທະນາຂອງຂະແໜງການອື່ນ ລວມທັງສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

2. ຮັບປະກັນຄວາມປອດໄພໃນການສັນຈອນ, ບໍ່ສົ່ງຜົນກະທົບ ຕໍ່ສິດ ແລະ ຜົນປະໂຫຍດລວມຂອງປະຊາຊົນ, ໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ, ບູຮານສະຖານ ແລະ ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມ;

3. ມີຄວາມໂປ່ງໃສ, ຍືນຍົງ ແລະ ສາມາດກວດສອບໄດ້;

4. ຮັບປະກັນການມີສ່ວນຮ່ວມຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບວຽກງານເຂດສະຫງວນຂອງທາງຫຼວງ ໃນຂອບເຂດທົ່ວປະເທດ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບເຂດສະຫງວນຂອງທາງດ່ວນ ຊຶ່ງໃຫ້ປະຕິບັດຕາມລະບຽບການ ຕ່າງຫາກ.

## ພາກທີ II
## ເຂດສະຫງວນຂອງທາງຫຼວງ
### ໝວດທີ 1
### ປະເພດເຂດສະຫງວນຂອງທາງຫຼວງ

**ມາດຕາ 6 ປະເພດເຂດສະຫງວນຂອງທາງຫຼວງ**

ເຂດສະຫງວນຂອງທາງຫຼວງ ແຕ່ລະປະເພດ ປະກອບດ້ວຍ:

1. ຢູ່ໜ້າດິນ;
2. ຢູ່ເທິງໜ້າດິນ;
3. ຢູ່ໃຕ້ດິນ;
4. ຢູ່ເທິງໜ້ານ້ຳ.

**ມາດຕາ 7 ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງ**

ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງ ແຕ່ລະປະເພດ ມີລວງກວ້າງ ດັ່ງນີ້:

1. ເບື້ອງລະ ຊາວຫ້າແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງແຫ່ງຊາດ ແລະ ເບື້ອງລະ ສີ່ສິບ ຫາ ຫົກສິບແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງແຫ່ງຊາດ ທີ່ຈະກໍ່ສ້າງໃໝ່;

2. ເບື້ອງລະ ສິບຫ້າແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງແຂວງ;

3. ເບື້ອງລະ ສິບແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງເມືອງ;

4. ເບື້ອງລະ ຫ້າແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຊົນນະບົດ.

ສຳລັບເຂດສະຫງວນທາງຫຼວງໃນຕົວເມືອງ ແລະ ເຂດສະຫງວນຂອງທາງຕົວເມືອງ ຢູ່ເຂດພູດອຍ ເຂດສູງຊັນ ໃຫ້ປະຕິບັດຕາມແຜນຜັງລວມຂອງຕົວເມືອງ.

ສ່ວນເຂດສະຫງວນຂອງທາງສະເພາະ ໃຫ້ປະຕິບັດຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານຄວາມເປັນເອກະພາບກັບອົງການຄຸ້ມຄອງ ແລະ ກວດກາວຽກງານເຂດສະຫງວນຂອງທາງຫຼວງ.

**ມາດຕາ 8 ເຂດສະຫງວນຢູ່ເທິງໜ້າດິນຂອງທາງຫຼວງ**

ເຂດສະຫງວນຢູ່ເທິງໜ້າດິນຂອງທາງຫຼວງ ແຕ່ລະປະເພດ ມີລວງສູງ ບໍ່ໃຫ້ຫຼຸດ ຫ້າແມັດ ນັບແຕ່ ໜ້າທາງລົດແລ່ນ, ໜ້າທາງຄົນຍ່າງ ແລະ ໜ້າຂົວ.

ໃນກໍລະນີສາຍໄຟຟ້າ, ສາຍໂທລະຄົມມະນາຄົມ ແລະ ການສື່ສານ ຂ້າມຜ່ານຢູ່ເທິງເຂດສະຫງວນ ຂອງທາງຫຼວງ ໃຫ້ເພີ່ມໄລຍະຄວາມປອດໄພເຂົ້າຕື່ມ ຕາມມາດຕະຖານເຕັກນິກຂອງພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 9 ເຂດສະຫງວນຢູ່ໃຕ້ດິນຂອງທາງຫຼວງ**

ເຂດສະຫງວນຢູ່ໃຕ້ດິນຂອງທາງຫຼວງ ແຕ່ລະປະເພດ ກຳນົດຕາມກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງແຕ່ລະກິດຈະການກໍ່ສ້າງ ແລະ ສ້ອມແປງ ເຊັ່ນ ອຸໂມງ, ທາງລອດໃຕ້ດິນ, ການວາງທໍ່ນ້ຳປະປາ, ສາຍໄຟຟ້າ, ສາຍໂທລະຄົມມະນາຄົມ ແລະ ການສື່ສານ, ທໍ່ສົ່ງນ້ຳມັນ-ອາຍແກັສ ແລະ ອື່ນໆ.

**ມາດຕາ 10 ເຂດສະຫງວນຂອງຂົວຢູ່ເທິງໜ້ານ້ຳ**

ເຂດສະຫງວນຂອງຂົວຢູ່ເທິງໜ້ານ້ຳ ແມ່ນ ນັບແຕ່ຂອບດ້ານນອກສຸດຂອງໂຄງສ້າງຂົວ ອອກໄປຢູ່ ດ້ານເໜືອນ້ຳໄຫຼ ແລະ ດ້ານໃຕ້ນ້ຳໄຫຼຂອງຂົວ ມີລວງກວ້າງທັງສອງເບື້ອງ ດັ່ງນີ້:

1. ສຳລັບຂົວທີ່ມີລວງຍາວ ແຕ່ໜຶ່ງຮ້ອຍແມັດລົງມາ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ ສອງຮ້ອຍຫ້າສິບແມັດ ແລະ ຢູ່ດ້ານໃຕ້ນ້ຳໄຫຼ ແມ່ນ ຫ້າຮ້ອຍແມັດ;

2. ສຳລັບຂົວທີ່ມີລວງຍາວ ຫຼາຍກວ່າໜຶ່ງຮ້ອຍແມັດ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ ສອງຮ້ອຍຫ້າສິບແມັດ ແລະ ຢູ່ດ້ານໃຕ້ນ້ຳໄຫຼ ແມ່ນ ໜຶ່ງພັນແມັດ;

3. ສຳລັບຂົວທີ່ມີລວງຍາວ ຫຼາຍກວ່າຫ້າຮ້ອຍແມັດ ຢູ່ດ້ານເໜືອນ້ຳໄຫຼ ແມ່ນ ສາມຮ້ອຍແມັດ ແລະ ຢູ່ດ້ານໃຕ້ນ້ຳໄຫຼ ແມ່ນ ໜຶ່ງພັນຫ້າຮ້ອຍແມັດ.

## ໝວດທີ 2

## ເຂດສະຫງວນຂອງ ວົງວຽນ ແລະ ທາງຫຼວງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ

**ມາດຕາ 11 ເຂດສະຫງວນຢູ່ໜ້າດິນຂອງວົງວຽນ**

ເຂດສະຫງວນຢູ່ໜ້າດິນຂອງວົງວຽນ ໃຫ້ກຳນົດຕາມເງື່ອນໄຂ ດັ່ງນີ້:

1. ພື້ນທີ່, ລັກສະນະພູມີປະເທດ ແລະ ພູມສັນຖານ;
2. ຄວາມໜາແໜ້ນຂອງປະຊາກອນອ້ອມຂ້າງ;
3. ປະລິມານການສັນຈອນ;
4. ການເຊື່ອມຈອດຂອງລະບົບທາງຫຼວງ, ຖະໜົນ;
5. ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງວິ້ງວຽນ.

ລາຍລະອຽດໃນການກຳນົດເຂດສະຫງວນຢູ່ໜ້າດິນຂອງວົງວຽນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 12 ເຂດສະຫງວນຂອງທາງຫຼວງຢູ່ໜ້າດິນຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ**

ເຂດສະຫງວນຂອງທາງຫຼວງຢູ່ໜ້າດິນຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ ໃຫ້ກຳນົດຕາມເງື່ອນໄຂຕົວຈິງຂອງລັກສະນະພູມີປະເທດ ແລະ ພູມສັນຖານຂອງແຕ່ລະເຂດ ດັ່ງນີ້:

1. ຄວາມເນີນຂອງໜ້າດິນທຳມະຊາດ;
2. ຄວາມສູງຂອງພູຈາກໜ້າທາງ;
3. ຄວາມກວ້າງຂອງໜ້າທາງທີ່ຈະຂະຫຍາຍໃນອະນາຄົດ;
4. ຄວາມສະຖຽນລະພາບຂອງໂຄງສ້າງດິນ, ຫີນຢູ່ເບື້ອງເນີນພູ ແລະ ເບື້ອງຕະລິ່ງ.

ລາຍລະອຽດໃນການກຳນົດເຂດສະຫງວນຂອງທາງຫຼວງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 13 ເຂດສະຫງວນຂອງທາງຫຼວງຢູ່ເທິງໜ້າດິນ ແລະ ໃຕ້ດິນຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ**

ເຂດສະຫງວນຂອງທາງຫຼວງຢູ່ເທິງໜ້າດິນ ແລະ ໃຕ້ດິນຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ ໃຫ້ປະຕິບັດຕາມມາດຕາ 8 ແລະ 9 ຂອງດຳລັດສະບັບນີ້.

## ພາກທີ III
## ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ

**ມາດຕາ 14 ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງເຂດສະຫງວນຂອງທາງຫຼວງ ໂດຍການປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດ້ວຍການສຳຫຼວດ, ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ ແລະ ຂຶ້ນບັນຊີກິດຈະການທີ່ຢູ່ເຂດສະຫງວນຂອງທາງຫຼວງ.

ໃນເຂດສະຫງວນຂອງທາງຫຼວງ ບໍ່ອະນຸຍາດໃຫ້ມີການກໍ່ສ້າງ ຫຼື ປຸກສ້າງກິດຈະການໃດໜຶ່ງ ເວັ້ນເສຍແຕ່ກໍລະນີຈຳເປັນ ຊຶ່ງຕ້ອງໄດ້ຂໍອະນຸຍາດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນ.

ສຳລັບການກໍ່ສ້າງ ຫຼື ປຸກສ້າງກິດຈະການໃດໜຶ່ງ ກ່ອນດຳລັດສະບັບນີ້ມີຜົນສັກສິດ ກໍໃຫ້ຂໍອະນຸຍາດເພື່ອຄຸ້ມຄອງ ແລະ ບໍ່ໃຫ້ມີການກໍ່ສ້າງ ຫຼື ປຸກສ້າງເພີ່ມເຕີມ.

**ມາດຕາ 15 ການສຳຫຼວດເຂດສະຫງວນຂອງທາງຫຼວງ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຳຫຼວດ, ເກັບກຳ ຂໍ້ມູນຂອບເຂດເນື້ອທີ່ ເພື່ອກຳນົດເປັນເຂດສະຫງວນຂອງທາງຫຼວງ ພ້ອມທັງປັກຫຼັກໝາຍເຂດດັ່ງກ່າວ.

**ມາດຕາ 16 ການຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ ດ້ວຍການສັງລວມຂໍ້ມູນຈາກການສຳຫຼວດ ເປັນຕົ້ນ ຊື່ຂອງທາງຫຼວງແຕ່ລະປະເພດ, ພື້ນທີ່ສະຫງວນໄວ້ ເພື່ອຄຸ້ມຄອງ ແລະ ຕິດຕາມ ກວດກາ.

ກະຊວງໂຍທາທິການ ແລະ ຂົນສົ່ງ ສັງລວມການຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ ໃນຂອບເຂດທົ່ວປະເທດ ແລ້ວສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສັງລວມຂຶ້ນບັນຊີຄຸ້ມຄອງຢ່າງລວມສູນ.

**ມາດຕາ 17 ການຂຶ້ນບັນຊີກິດຈະການທີ່ຢູ່ໃນເຂດສະຫງວນຂອງທາງຫຼວງ**

ຂະແໜງການໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກຳຂໍ້ມູນ ແລະ ຂຶ້ນບັນຊີກິດຈະການທີ່ຢູ່ໃນເຂດສະຫງວນຂອງທາງຫຼວງ ທີ່ຕົນຮັບຜິດຊອບ ເປັນຕົ້ນ ເສົາໄຟຟ້າ, ທໍ່ນ້ຳປະປາ, ໂທລະຄົມມະນາຄົມ ແລະ ການສື່ສານ, ປ້າຍໂຄສະນາ, ປ້ອມຍາມ, ສິ່ງປຸກສ້າງ, ການຜະລິດກະສິກຳ ເພື່ອສ້າງເປັນຖານຂໍ້ມູນນຳໃຊ້ເຂົ້າ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາເຂດສະຫງວນຂອງທາງຫຼວງ.

**ມາດຕາ 18 ການຂໍອະນຸຍາດດຳເນີນກິດຈະການຢູ່ເຂດສະຫງວນຂອງທາງຫຼວງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຄວາມຈຳເປັນໃນການດຳເນີນກິດຈະການໃດໜຶ່ງ ຢູ່ໃນເຂດສະຫງວນຂອງທາງຫຼວງ ເປັນຕົ້ນ ເສົາໄຟຟ້າ, ທໍ່ນ້ຳປະປາ, ໂທລະຄົມມະນາຄົມ ແລະ ການສື່ສານ, ປ້າຍໂຄສະນາ, ປ້ອມຍາມ, ການຜະລິດກະສິກຳ ຕ້ອງຂໍອະນຸຍາດນຳຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ເສຍ ຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

ສຳລັບເອກະສານປະກອບ, ຂັ້ນຕອນ ໃນການຂໍອະນຸຍາດກໍ່ສ້າງ ຫຼື ປຸກສ້າງກິດຈະການຢູ່ເຂດສະຫງວນຂອງທາງຫຼວງ ແລະ ຫຼັກການ, ມາດຕະຖານໃນການກໍ່ສ້າງ ຫຼື ປຸກສ້າງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 ການຂໍອະນຸຍາດດຳເນີນກິດຈະການຊົ່ວຄາວຢູ່ເຂດສະຫງວນຂອງທາງຫຼວງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນກິດຈະການຊົ່ວຄາວໃດໜຶ່ງ ຢູ່ເຂດສະຫງວນຂອງທາງຫຼວງ ເປັນຕົ້ນ ງານປະເພນີ, ງານຕະຫຼາດນັດ ຕ້ອງຂໍອະນຸຍາດນຳອົງການປົກຄອງທ້ອງ ຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ ໂດຍມີການປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 20 ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການຢູ່ເຂດສະຫງວນຂອງທາງຫຼວງ**

ຜູ້ດຳເນີນກິດຈະການຢູ່ເຂດສະຫງວນຂອງທາງຫຼວງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ກໍ່ສ້າງ, ປຸກສ້າງ ກິດຈະການຢູ່ເຂດສະຫງວນຂອງທາງຫຼວງ ຕາມທີ່ໄດ້ຮັບອະນຸຍາດ;

2. ໄດ້ຮັບການອຳນວຍຄວາມສະດວກ ໃນການດຳເນີນກິດຈະການຢູ່ເຂດສະຫງວນຂອງທາງຫຼວງ;

3. ໄດ້ຮັບຜົນປະໂຫຍດຈາກການດຳເນີນກິດຈະການຢູ່ເຂດສະຫງວນຂອງທາງຫຼວງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;

4. ນຳໃຊ້ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ ຕາມທີ່ໄດ້ຮັບອະນຸຍາດ ໃນກໍລະນີກໍ່ໃຫ້ເກີດມີຄວາມເສຍຫາຍ ເປັນຕົ້ນ ຂຸດ, ເຈາະ ຕ້ອງໄດ້ແກ້ໄຂ ແລະ ບູລະນະຟື້ນຟູ ໃຫ້ຢູ່ໃນສະພາບເດີມ;

5. ອຳນວຍຄວາມສະດວກ, ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ຮັບປະກັນໃຫ້ມີຄວາມສະດວກ ແລະ ປອດໄພໃນການສັນຈອນ;

7. ຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ;

8. ແຈ້ງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນກໍລະນີທີ່ພົບເຫັນມີການ ກໍ່ສ້າງ, ປຸກສ້າງ ຫຼື ດຳເນີນກິດຈະການໃດໜຶ່ງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

9. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນການປຸກສ້າງ, ກໍ່ສ້າງ ຫຼື ກິດຈະການໃດໜຶ່ງຢູ່ເຂດສະຫງວນທາງຫຼວງ ໂດຍບໍ່ໄດ້ຮັບອະ ນຸຍາດ;

2. ຖິ້ມ, ຕົມ, ກອງ ວັດສະດຸໃດໜຶ່ງ ທີ່ເປັນການກີດຂວາງການລະບາຍນ້ຳແຄມທາງ ແລະ ທາງໄຫຼຂອງນ້ຳໃນເຂດສະຫງວນຂອງທາງຫຼວງ;

3. ຂຸດ, ເຈາະ, ກົ່ນ ຫຼື ຖົມ ດິນ ຢູ່ໃນເຂດສະຫງວນຂອງທາງຫຼວງ ຊຶ່ງເປັນຜົນກະທົບເຮັດໃຫ້ບ່າທາງ, ໜ້າທາງຫຼວງ ເປ່ເພເສຍຫາຍ;

4. ຖິ້ມ ຂີ້ເຫຍື້ອ, ສິ່ງເສດເຫຼືອ, ເສດວັດສະດຸກໍ່ສ້າງ, ຖອກ, ເທນ້ຳເປື້ອນ ໃນເຂດສະຫງວນຂອງ ທາງຫຼວງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການ**

ຫ້າມຜູ້ດຳເນີນກິດຈະການ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນການປຸກສ້າງ, ກໍ່ສ້າງ ຫຼື ກິດຈະການໃດໜຶ່ງ ໂດຍບໍ່ມີລະບົບປ້ອງກັນຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ, ບໍ່ຖືກຕ້ອງຕາມແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ໄດ້ຮັບອະນຸຍາດ;

2. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອສະແຫວງຫາຜົນປະໂຫຍດ ສ່ວນຕົວ;

3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ອະນຸຍາດໃຫ້ປຸກສ້າງ, ກໍ່ສ້າງ ຫຼື ດຳເນີນກິດຈະການໃດໜຶ່ງ ຢູ່ເຂດສະຫງວນຂອງທາງຫຼວງ ທີ່ບໍ່ຖືກຕ້ອງ ຕາມດຳລັດສະບັບນີ້ ແລະ ກົດໝາຍທີ່ກ່ຽວຂ້ອງ;

2. ຮັບສິນບົນ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ກ່ຽວກັບວຽກງານເຂດສະຫງວນຂອງທາງຫຼວງ;

3. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ໝູ່ຄະນະ;

4. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ໃນການຕິດຕາມ ກວດກາວຽກງານເຂດສະຫງວນຂອງທາງຫຼວງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ V

## ການຄຸ້ມຄອງ ແລະ ກວດກາວຽກງານເຂດສະຫງວນຂອງທາງຫຼວງ

**ມາດຕາ 24 ອົງການຄຸ້ມຄອງ ແລະ ກວດກາວຽກງານເຂດສະຫງວນຂອງທາງຫຼວງ**

ອົງການຄຸ້ມຄອງ ແລະ ກວດກາວຽກງານເຂດສະຫງວນຂອງທາງຫຼວງ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ;
4. ໜ່ວຍງານໂຍທາທິການ ແລະ ຂົນສົ່ງປະຈຳບ້ານ.

ນອກຈາກນັ້ນ ຍັງມີເຈົ້າໜ້າທີ່ທາງຫຼວງ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານເຂດສະຫງວນຂອງທາງຫຼວງ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການ ລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຂດສະຫງວນຂອງທາງຫຼວງ;

4. ປູກຈິດສຳນຶກໃຫ້ປະຊາຊົນ ທີ່ຢູ່ບໍລິເວນລຽບຕາມແຄມທາງຫຼວງ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ ໃນຂອບເຂດທົ່ວປະເທດ;

5. ສຳຫຼວດ ແລະ ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງແຫ່ງຊາດ ແລະ ສັງລວມບັນຊີເຂດສະຫງວນຂອງທາງຫຼວງທຸກປະເພດ ໃນຂອບເຂດທົ່ວປະເທດ ແລ້ວສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

6. ອະນຸຍາດ ໃນການປຸກສ້າງ, ກໍ່ສ້າງ ຫຼື ກິດຈະການໃດໜຶ່ງ ຢູ່ໃນເຂດສະຫງວນຂອງທາງຫຼວງແຫ່ງຊາດ;

7. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມ ກວດກາການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ໃນຂອບເຂດທົ່ວປະເທດ;

8. ຂຶ້ນແຜນງົບປະມານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ເຂດສະຫງວນຂອງທາງຫຼວງ;

9. ຄົ້ນຄວ້າການກຳນົດອັດຕາຄ່າທຳນຽມ ແລະ ຄ່າບໍລິການ ໃນການດຳເນີນກິດຈະການໃດໜຶ່ງຢູ່ເຂດສະຫງວນຂອງທາງຫຼວງ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາຮັບຮອງ;

10. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານເຂດສະຫງວນຂອງທາງຫຼວງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂດສະຫງວນຂອງທາງຫຼວງ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ ແລະ ແຜນແມ່ບົດ ການພັດທະນາເຂດສະຫງວນຂອງທາງຫຼວງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ;

2. ໂຄສະນາ ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ ແລະ ລະບຽບການ ກ່ຽວກັບການພັດທະນາ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

3. ປູກຈິດສຳນຶກໃຫ້ປະຊາຊົນ ທີ່ຢູ່ບໍລິເວນລຽບຕາມແຄມທາງຫຼວງ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງເຂດສະຫງວນຂອງທາງຫຼວງ;

4. ຂຶ້ນແຜນ ແລະ ນຳໃຊ້ງົບປະມານ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງ, ພັດທະນາ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ;

5. ອະນຸຍາດໃຫ້ດຳເນີນກິດຈະການໃດໜຶ່ງ ຢູ່ໃນເຂດສະຫງວນຂອງທາງຫຼວງ ຕາມການມອບໝາຍຂອງກະຊວງໂຍທາທິການ ແລະ ຂົນສົ່ງ;

6. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ພະແນກການອື່ນ ເພື່ອພິຈາລະນາແກ້ໄຂບັນຫາຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຂົ້ານຳໃຊ້ເຂດສະຫງວນຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ;

7. ຄຸ້ມຄອງ, ຕິດຕາມ ກວດກາ, ສຳຫຼວດ, ກຳນົດ ແລະ ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ;

8. ສຳຫຼວດ, ເກັບກຳ ຂໍ້ມູນ ແລະ ສະຖິຕິ ຂອງສິ່ງປຸກສ້າງ, ກໍ່ສ້າງ ແລະ ກິດຈະການອື່ນ ໃນເຂດສະຫງວນຂອງທາງຫຼວງ;

9. ສະເໜີກົມຂົວທາງ ເພື່ອຄົ້ນຄວ້າ ແລະ ນຳສະເໜີກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງເອົາ ການຍົກລະດັບເຂດສະຫງວນຂອງທາງຫຼວງ;

10. ຮັບຮອງເອົາແບບແຜນຜັງໂຄງລ່າງພື້ນຖານທາງດ້ານເຕັກນິກ ທີ່ສະເໜີນຳໃຊ້ພື້ນທີ່ໃນເຂດສະຫງວນຂອງທາງຫຼວງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 27 ສິດ ແລະ ໜ້າທີ່ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ ແລະ ລະບຽບການ ກ່ຽວກັບການພັດທະນາ ແລະ ປົກປັກຮັກສາເຂດສະຫງວນທາງຫຼວງ;

2. ປຸກຈິດສຳນຶກໃຫ້ປະຊາຊົນ ທີ່ຢູ່ບໍລິເວນລຽບຕາມແຄມທາງຫຼວງ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

3. ຂຶ້ນແຜນ ແລະ ນຳໃຊ້ງົບປະມານ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງ, ພັດທະນາ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

4. ອະນຸຍາດໃຫ້ດຳເນີນກິດຈະການໃດໜຶ່ງ ຢູ່ໃນເຂດສະຫງວນຂອງທາງຫຼວງ ຕາມການມອບໝາຍຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ;

5. ປະສານສົມທົບກັບຫ້ອງການອື່ນ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂບັນຫາທີ່ເກີດຂຶ້ນ ໃນເຂດສະຫງວນຂອງທາງຫຼວງ;

6. ຄຸ້ມຄອງ, ຕິດຕາມ ກວດກາ, ສຳຫຼວດ, ກຳນົດ ແລະ ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ;

7. ສຳຫຼວດ, ເກັບກຳ ຂໍ້ມູນ ແລະ ສະຖິຕິຂອງສິ່ງປຸກສ້າງ, ກໍ່ສ້າງ ແລະ ກິດຈະການອື່ນ ໃນເຂດສະຫງວນຂອງທາງຫຼວງ;

8. ສະເໜີພະແນກໂຍທາທິການ ແລະ ຂົນສົ່ງ ຄົ້ນຄວ້າ ແລະ ນຳສະເໜີກົມຂົວທາງ ເພື່ອນຳສະເໜີກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງເອົາ ການຍົກລະດັບເຂດສະຫງວນຂອງທາງຫຼວງ;

9. ປະສານສົມທົບ ກັບຫ້ອງການອື່ນ ແລະ ອົງການປົກຄອງບ້ານທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂບັນຫາຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຂົ້ານຳໃຊ້ເຂດສະຫງວນຂອງທາງຫຼວງ;

10. ຈັດຕັ້ງປະຕິບັດຕາມແຜນຜັງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ທີ່ໄດ້ຖືກຮັບຮອງ ໃຫ້ຕິດຕັ້ງຢູ່ໃນເຂດສະຫງວນຂອງທາງຫຼວງ;

11. ຮັບຮອງເອົາແບບແຜນຜັງໂຄງລ່າງພື້ນຖານທາງດ້ານເຕັກນິກ ທີ່ສະເໜີນຳໃຊ້ພື້ນທີ່ໃນເຂດສະຫງວນທາງຫຼວງ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 28 ສິດ ແລະ ໜ້າທີ່ຂອງໜ່ວຍງານໂຍທາທິການ ແລະ ຂົນສົ່ງປະຈຳບ້ານ**

ໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ໜ່ວຍງານໂຍທາທິການ ແລະ ຂົນສົ່ງປະຈຳບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການປົກປັກຮັກສາໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ;

2. ລາຍງານການລະເມີດເຂດສະຫງວນຂອງທາງຫຼວງ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ ແລະ ເຈົ້າໜ້າທີ່ທາງຫຼວງ;

3. ເປັນເຈົ້າການປຸກລະດົມປະຊາຊົນ ໃຫ້ການຮ່ວມມື ແລະ ປະກອບສ່ວນເຂົ້າ ໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 29 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບອົງການຄຸ້ມຄອງ ແລະ ກວດກາວຽກງານເຂດສະຫງວນຂອງທາງຫຼວງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 30 ເຈົ້າໜ້າທີ່ທາງຫຼວງ**

ເຈົ້າໜ້າທີ່ທາງຫຼວງ ແມ່ນ ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທາງຫຼວງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ; ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການແບ່ງຂັ້ນຄຸ້ມຄອງ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອອກລະບຽບການ ກ່ຽວກັບເງື່ອນໄຂ, ມາດຕະຖານ, ເຄື່ອງໝາຍ, ເຄື່ອງແບບ, ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ທາງຫຼວງ.

**ມາດຕາ 31 ເນື້ອໃນການກວດກາ**

ການກວດວຽກງານຄຸ້ມຄອງເຂດສະຫງວນຂອງທາງຫຼວງ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາການຄຸ້ມຄອງເຂດສະຫງວນທາງຫຼວງ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຂດສະຫງວນຂອງທາງຫຼວງ;

2. ການຈັດຕັ້ງປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ທາງຫຼວງ ແລະ ພະນັກງານຮັບຜິດຊອບວຽກງານຄຸ້ມຄອງເຂດສະຫງວນຂອງທາງຫຼວງ;

3. ການນຳໃຊ້ເຂດສະຫງວນຂອງທາງຫຼວງຂອງຜູ້ດຳເນີນກິດຈະການ;

**ມາດຕາ 32 ຮູບການການກວດກາ**

ການກວດກາວຽກງານເຂດສະຫງວນຂອງທາງຫຼວງ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 33 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ທີ່ເປັນການປະກອບສ່ວນເຂົ້າໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວກັບວຽກງານເຂດສະຫງວນຂອງທາງຫຼວງ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

### ມາດຕາ 35 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນການກະທຳຜິດຄັ້ງທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກການລະເມີດໄວ້. ໃນກໍລະນີມີການລະເມີດ ແຕ່ສອງຄັ້ງຂຶ້ນໄປ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງດຳລັດສະບັບນີ້.

### ມາດຕາ 36 ມາດຕະການທາງວິໄນ

ເຈົ້າໜ້າທີ່ ແລະ ພະນັກງານລັດທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 37 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍການປັບໃໝ ແລະ ມາດຕະການອື່ນຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການຈະລາຈອນທາງບົກ ສະບັບເລກທີ 568/ລບ, ລົງວັນທີ 16 ກັນຍາ 2021 ແລ້ວຍັງຈະຖືກປັບໃໝ ຕາມກໍລະນີ ດັ່ງນີ້:

1. ການປຸກສ້າງ, ກໍ່ສ້າງ ຫຼື ດຳເນີນກິດຈະການຊົ່ວຄາວ ຫຼື ຖາວອນ ໃນເຂດສະຫງວນຂອງທາງຫຼວງ ເຊັ່ນ ເສົາໄຟຟ້າ, ທໍ່ສາຍໄຟຟ້າ, ທໍ່ນໍ້າປະປາ, ໂທລະຄົມມະນາຄົມ ແລະ ການສື່ສານ, ທໍ່ສົ່ງນໍ້າມັນ-ອາຍແກັສ, ປ້າຍໂຄສະນາ, ທາງເຂົ້າເຮືອນ, ປໍ້ານໍ້າມັນ-ອາຍແກັສ, ສະຖານທີ່ບໍລິການ ແລະ ອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 450.000 ກີບ ຕໍ່ໜຶ່ງຄັ້ງ ພ້ອມທັງໃຫ້ຍົກຍ້າຍ ຫຼື ມ້າງອອກພາຍໃນ ຊາວສີ່ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກຳນົດເວລານັ້ນ ຜູ້ລະເມີດຈະຖືກປັບໃໝ 120.000 ກີບ ຕໍ່ວັນ;

2. ການວາງສິ່ງຂອງ ເຊັ່ນ ປ້າຍໂຄສະນາ, ກອງໄມ້, ກອງດິນ, ກອງຫີນ, ກອງຊາຍ, ກອງເຫຼັກ ແລະ ອື່ນໆ ໃນເຂດສະຫງວນທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນກະທົບຕໍ່ໂຄງສ້າງຂອງທາງ, ລະບົບລະບາຍນໍ້າແຄມທາງ, ທຳລາຍລະບົບນິເວດ ຈະຖືກປັບໃໝ 300.000 ກີບ ຕໍ່ໜຶ່ງຄັ້ງ ພ້ອມທັງໃຫ້ຍົກຍ້າຍສິ່ງກີດຂວາງດັ່ງກ່າວ ອອກພາຍໃນ ຊາວສີ່ ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກຳນົດເວລານັ້ນ ຜູ້ລະເມີດຈະຖືກປັບໃໝ 100.000 ກີບ ຕໍ່ວັນ;

3. ການຂຸດ ຫຼື ຖົມດິນ ໃນເຂດສະຫງວນຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 45.000 ກີບ ຕໍ່ໜຶ່ງແມັດກ້ອນ ພ້ອມທັງປັບປຸງຄືນໃຫ້ຢູ່ໃນສະພາບເດີມ ພາຍໃນເວລາທີ່ກຳນົດ. ຖ້າກາຍກຳນົດເວລານັ້ນ ຜູ້ລະເມີດ ຈະຖືກປັບໃໝ ຊົ່ວໂມງລະ 15.000 ກີບ ຕໍ່ໜຶ່ງແມັດກ້ອນ;

4. ການຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອ, ນໍ້າເປື້ອນ ຫຼື ສິ່ງເສດເຫຼືອອື່ນໆ ໃສ່ໃນເຂດສະຫງວນຂອງທາງຫຼວງ ຊຶ່ງກໍ່ຄວາມເສຍຫາຍຕໍ່ສິ່ງແວດລ້ອມ ແລະ ລະບົບນິເວດ ຈະຖືກປັບໃໝ 100.000 ກີບ ຕໍ່ຄັ້ງ ພ້ອມທັງໃຫ້ຍົກຍ້າຍ ຫຼື ອະນາໄມ ສິ່ງເສດເຫຼືອດັ່ງກ່າວ ອອກພາຍໃນ ຊາວສີ່ ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກຳນົດເວລານັ້ນ ຜູ້ລະເມີດ ຈະຖືກປັບໃໝ 50.000 ກີບ ຕໍ່ວັນ;

5. ການທຳລາຍ ຫຼື ຕັດຕົ້ນໄມ້ທີ່ປູກໄວ້ ເພື່ອຮັກສາໂຄງສ້າງຂອງທາງ ຫຼື ປະດັບຕາມທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 500.000 ກີບ ຕໍ່ຕົ້ນ ພ້ອມທັງທົດແທນຄືນມູນຄ່າທີ່ເສຍຫາຍທັງໝົດ.

**ມາດຕາ 38 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດລວມຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນ ໄດ້ກໍ່ຂຶ້ນ.

**ມາດຕາ 39 ມາດຕະການທາງອາຍາ**

ບຸກຄົນໃດ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ໄດ້ກຳນົດການກະທຳຜິດທາງອາຍາ ແລະ ໂທດ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ພົນລຳ ວົງພາວັນ